# ບົດທີ 24

# ການສວຍໂອກາດປ່າວປະກາດ




ໃນ ກິດຈະການ 1:8 ພະອົງວາງແຜນການເພື່ອໃຫ້ພວກສາວົກຂອງພະອົງອອກໄປປ່າວປະກາດ ຫຼັງຈາກເຂົາໄດ້ຮັບອຳ ນາດຈາກພະວິນຍານບໍລິສຸດ.

ບັນຫາແຕ່ພວກເຮົາອາດຈະມີໂອກາດທີ່ຈຳກັດ ເຖິງວ່າເຮົາຕັ້ງປະຊຸມໃຫຍ່ເພື່ອປ່າວປະກາດບໍ່ໄດ້ ເຖິງວ່າເຮົາເດີນທາງໄປປ່າວປະກາດໃນຕ່າງປະເທດບໍ່ໄດ້ ແຕ່ເຮົາຍັງຈະສວຍໂອກາດປ່າວປະ ກາດຢ່າງໜຶ່ງ ຢ່າງໃດໄດ້.

**1** ກ. ໃນ ບົດທີ 22 ເຮົາໄດ້ຮຽນເລື່ອງຫຍັງ? ________________________________

ຂ. ໃນ ບົດທີ 23 ເດ? ____________________________________________

**2** ຕາມ ກຈກ 1:8 ເຮົາຄວນຈະເລີ່ມຕົ້ນປ່າວປະກາດຢູ່ໃສ? (ເລືອກ)

ກ. ໃນບ້ານທີ່ຢູ່ປະຈຳ.

ຂ. ໃນບ່ອນນະມັດສະການ.

ຄ. ໃນຕ່າງປະເທດ.



**3** ຜູ້ໃດກໍ່ຕາມຫາໂອກາດເວົ້າກັບຄົນໃນບ້ານດຽວກັນ
ຫຼື ໃນຄອບຄົວດຽວກັນກໍ່ໄດ້. ໃນ ມາລະໂກ 5:18-19
ຄົນທີ່ດີ ຈາກຜີສີງມາອ້ອນວອນຂໍຢູ່ນຳ ພະເຢຊູ ແຕ່ພະອົງບອກໃຫ້ເພິ່ນໄປເປັນພິຍານ
ກ. ຢູ່ໃສ? ____________________
ຂ. ໃຫ້ໃຜຟັງ? ____________________

*ເຖິງວ່າເຮົາມີໂອກາດສົນທະນາກັບຍາດພີ່ນ້ອງແລະເພື່ອນບ້ານໄດ້ງ່າຍກໍ່ຕາມເຂົາອາດຈະຊ້າກວ່າໝູ່ໃນການ ຮັບເຊື່ອພວກນ້ອງຂອງພະເຢຊູເອງບໍ່ໄດ້ຮັບເຊື່ອໃນພະອົງຈົນກວ່າພະອົງຄືນພະຊົນຈາກຕາຍ.*

**4** ກ. ໃນພວກອັກຄະສາວົກຂອງພະເຢຊູ ອັນເດອາໄດ້ພາຜູ້ໃດມາຫາພະອົງ? __________
ຂ. ເປໂຕ ເປັນຍາດຢ່າງໃດຂອງ ອັນເດອາ? __________

**5** ເຮົາອາດຈະຫາໂອກາດປ່າວປະກາດກັບບຸກຄົນໃດ ຄົນໜຶ່ງທີ່ຢູ່ໃກ້ສິດກັບເຮົາ ເຊັ່ນ: ຍາດພີ່ນ້ອງ ເຮືອນໃກ້ຄຽງ ແລະ ເພື່ອນຮ່ວມບ້ານດຽວກັນ ໆລໆ ແຕ່ບາງເທື່ອເຮົາຈະຢູ່ໃກ້ກັບຄົນທີ່ບໍ່ແມ່ນຍາດ ຫຼື ເພື່ອນບ້ານດ້ວຍ.
ກ. ໃນ ກິຈະການ 16:25 ແມ່ນໃຜເປັນຜູ້ຟັງ? __________
ຂ. ອີກຜູ້ໜຶ່ງທີ່ຮັບເຊື່ອໃນ ກຈກ 16:29-30 ແມ່ນໃຜ? __________
ຄ. ເປັນຍາດພີ່ນ້ອງກັນບໍ່? __________

**6** ຜູ້ທີ່ຟັງແລະຜູ້ທີ່ຮັບເຊື່ອໃນ ກຈກ 16 ນັ້ນຍ້ອນໄດ້ຟັງຄຳປະກາດຂອງໃຜ? _____ ແລະ ___

**7** ກ. ເຂົາຢູ່ໃກ້ກັນດ້ານຮ່າງກາຍບໍ່? __________
ຂ. ເຂົາເປັນຍາດພີ່ນ້ອງ ແລະ ເປັນເພື່ອນບ້ານກັນແມ່ນບໍ່? __________

**8** ກ. ແມ່ນໃຜສວຍໂອກາດນຳພາອ້າຍມາຫາພະອົງ? __________
ຂ. ແມ່ນໃຜສວຍໂອກາດປ່າວປະກາດໃນຄຸກ? __________

**9** ດັ່ງນັ້ນເຮົາປ່າວປະກາດໃນບ້ານເຮົາກໍ່ໄດ້ ແລະ ເຫັນວ່າມີຜູ້ປ່າວປະກາດໃນຄຸກໄດ້ດ້ວຍ. ຜູ້ທີ່ຢູ່ໃນບ້ານດຽວກັນ ເຄີຍຮູ້ຈັກກັນແຕ່ຫຼາຍປີມາແລ້ວ ແຕ່ຜູ້ທີ່ໃກ້ກັນດ້ານຮ່າງກາຍ ອາດຈະບໍ່ໄດ້ຮູ້ຈັກກັນດົນຄື: ຄົນທີ່ຢູ່ໃນຄຸກນຳກັນ. ສ່ວນຫຼາຍເຮົາມີໂອກາດສົນທະນາກັບຄົນທີ່ເຮັດວຽກງານຮ່ວມກັນກັບເຮົາດ້ວຍ.
ກ. ໃນພວກສາວົກຂອງ ພະເຢຊູ ມີອ້າຍນ້ອງກັນສອງຄູ່ (ຫຼື 4 ຄົນ) ທີ່ເຮັດອາຊີບດຽວກັນກ່ອນຈະຕິດຕາມພະອົງ ໄປໃນ 4 ຄົນນັ້ນມີໃຜແດ່? __________
ຂ. ໃນ ກຈກ 18:2-3 ອາຈານ ໂປໂລ ຢູ່ຮ່ວມກັບໝູ່ໃນອາຊີບໃດ? __________



**10** ຄົນທີ່ເປັນຍາດພີ່ນ້ອງກັນຫຼື ເປັນເພື່ອນບ້ານດຽວກັນ ເປັນຄົນທີ່ຮູ້ຈັກກັນດີ ແຕ່ດົນ.ຄົນທີ່ເຮັດວຽກດ້ວຍກັນ ກໍ່ຄຸ້ນເຄີຍກັນໄດ້ເໝືອນຄົນໃນຄຸກອາດຈະຢູ່ໃກ້ກັນ ດ້ານຮ່າງກາຍໃນຕອນທີ່ຢູ່ໃນຄຸກ ແຕ່ເປັນການຈຳເປັນ. ແຕ່ໃນ ກຈກ 8:26-40 ຟີລິບສວຍໂອກາດປ່າວປະກາດໃນເວລາໃດ? ______________________________

**11** ຟີລິບ ປ່າວປະກາດກັບຈັກຄົນໃນເວລາເດີນທາງນັ້ນ? ________________

**12** ເຫັນວ່າຜູ້ທີ່ສວຍໂອກາດປ່າວປະກາດ ຫຼື ກ່າວເຖິງອຳນາດຂອງພະອົງຕໍ່ບຸກຄົນມີດັ່ງຕໍ່ໄປນີ້:

ກ. ໂປໂລ ແລະ ຊີລາ ປະກາດໃຫ້ທຳມະໂລງໃນບ່ອນໃດ? ______________

ຂ. ຜູ້ທີ່ດີຈາກຜີສິງກັບໄປປ່າວປະກາດໃຫ້ໃຜຟັງ ຢູ່ໃສ? ________________

ຄ. ອັນເດອາພາໃຜມາຫາພະອົງ? _________________________

ງ. ໄທເອຕີໂອເປຍໄດ້ຮັບຟັງຂ່າວປະເສີດຈາກໃຜ? _______ ໃນໂອກາດໃດ? _______

**13** ໃຫ້ທ່ານສັງເກດດີໆວ່າເລື່ອງຂອງ ຟີລິບເພິ່ນສວຍໂອກາດເດີນທາງດ້ວຍກັນກັບໄທເອຕີໂອເປຍກໍ່ແມ່ນຢູ່ແຕ່ມີ ຄຳສັ່ງມາກ່ອນຟີລິບຈຶ່ງຢູ່ໃນທາງເສັ້ນນັ້ນ. ເພິ່ນຮັບຄຳສັ່ງຢ່າງໃດ? (ກຈກ 8:26) ________________________________

**14** ການປ່າວປະກາດໃນເວລາທີ່ເດີນທາງໄປເປັນໂອກາດດີຫຼາຍ ເພາະເຮັດໃຫ້ຂ່າວປະເສີດແຜ່ອອກໄປເຖິງທີ່ອື່ນ ບ່ອນນັກທ່ອງທ່ຽວ ຫຼື ຜູ້ເດີນທາງນັ້ນຈະໄປ ຟີລິບ ປ່າວປະກາດໃຫ້ຄົນນັ້ນຟັງ ແຕ່ອາຈານ ໂປໂລ ເດີນທາງໃນເຮືອທີ່ມີທັງໝົດ 276 ຄົນພວກເຂົາກໍ່ໄດ້ເຫັນແລະຮູ້ອຳນາດຂອງ ພະເຈົ້າ ດ້ວຍທາງອາຈານ ໂປໂລ (ກຈກ ບົດ 27) ພວກຄົນທີ່ເດີນທາງຮ່ວມກັບອາຈານ ໂປໂລ ມີຈັກຄົນທີ່ຮູ້ເຫັນອຳນາດຂອງພະເຈົ້າ? ________________

**15** ພວກຄຼິດສະຕຽນໃນສະໄໝພະຄຳພີໃໝ່ເຫັນມີຄົນສວຍໂອກາດປ່າວປະກາດຕໍ່ບຸກຄົນດັ່ງຕໍ່ໄປນີ້:

ກ. ແມ່ນໃຜປ່າວປະກາດໃນຄຸກ? _________________________

ຂ. ພະເຢຊູ ມີສາວົກ 4 ຄົນໃດ ທີ່ພາກັນອອກຈາກອາຊີບຫາປາແລ້ວມາຕິດຕາມພະອົງ?

______________________________________

ຄ. ຟີລິບ ປ່າວປະກາດພະທຳໃຫ້ຜູ້ໃດ ທີ່ເດີນທາງດ້ວຍກັນ? ______________

ງ. ແມ່ນໃຜພາອ້າຍມາຫາພະອົງ? _________________________

ຈ. ນັກປ່າວປະກາດຜູ້ໃດໄປຢູ່ຮ່ວມກັບໝູ່ອາຊີບດຽວກັນຄືຊ່າງຫຍິບຜ້າເຕັ້ນ? ________

**16** ກ. ແມ່ນໃຜເດີນທາງໄປປ່າວປະກາດໃຫ້ຜູ້ຍິງຟັງ? ________________

ຂ. ແມ່ນໃຜເດີນທາງຮ່ວມກັບສອງຮ້ອຍກວ່າຄົນ ແລ້ວເປັນພິຍານໃຫ້ເຂົາຮູ້? ________

*ບາງເທື່ອເຮົາປ່າວປະກາດໄປເທື່ອລະຄົນ ບາງເທື່ອເຮົາກໍ່ປ່າວປະກາດໃຫ້ຫຼາຍຄົນຟັງຮ່ວມກັນໄດ້. ຕາມທຳມະດາເຮົາຊອກຫາໂອກາດປ່າວປະກາດໃຫ້ແຕ່ລະຄົນຟັງໄດ້ງ່າຍແຕ່ດົນໆໄປເຮົາອາດຈະສວຍໂອກາດເປັນພິຍານຕໍ່ຫຼາຍຄົນໃນທີ່ດຽວໄດ້ດ້ວຍ.*

**17** ໃນສະໄໝ ພະຄຳພີໃໝ່ ພະເຢຊູ ແລະພວກອັກຄະສາວົກເຄີຍສວຍໂອກາດເຂົ້າໄປປ່າວປະກາດໃນໂຮງທຳຂອງ ສາສໜາຢິວຈົນກວ່າພວກຄົນຢິວໄລ່ເຂົາອອກ. ພວກເຮົາໃນທຸກວັນນີ້ມີໂອກາດປ່າວປະກາດໃນໂຮງທຳຢ່າງນັ້ນບໍ່? ________________________________

**18** ທ່ານ ມັດທາຍ ສວຍໂອກາດປ່າວປະກາດຢ່າງໃດໃນ ມັດທາຍ 9:10? ______________

**19** ດັ່ງນັ້ນຖ້າວ່າເຮົາປ່າວປະກາດໃນໂຮງທຳບໍ່ໄດ້ ແຕ່ເຮົາຍັງສວຍໂອກາດຢ່າງດຽວກັນກັບ ມັດທາຍ ໄດ້ຢ່າງໃດ? ________________________________

**20** ເທື່ອໃດທີ່ເຮົາຮັບລ້ຽງແຂກໃນເຮືອນເຮົາອາດຈະມີໂອກາດປ່າວປະກາດໄດ້ ຫຼື ເທື່ອໃດທີ່ເຮົາເປັນແຂກໃນເຮືອນ ຂອງ ເຂົາເຮົາອາດຈະສວຍໂອກາດກ່າວຄຳພິຍານໄດ້ຄືກັນ.

ກ. ແມ່ນ ພະເຢຊູ ຫຼື ມັດທາຍ ທີ່ເປັນເຈົ້າພາບຮັບລ້ຽງແຂກ? ____________________

ຂ. ຄົນໃດເປັນແຂກ? ________________________________

ຄ. ຄົນໃດເປີດໂອກາດໃຫ້ປ່າວປະກາດ? ________________________________

ງ. ຄົນໃດເປັນຜູ້ປະກາດ? ________________________________

ຈ. ໃຜເປັນຜູ້ຟັງ? ________________________________

**21** ພະເຢຊູ ເປັນແຂກໃນເຮືອນຂອງຫຼາຍໆຄົນຄື: ໃນເຮືອນຄົນຂີ້ທູດ ເຮືອນຂອງຟາລິຊາຍ ເຮືອນຂອງຄົນຜິດບາບ ເຮືອນຂອງນາງມາທາແລະ ມາລີອາແລ້ວຫຼັງຈາກ ພະອົງຄືນພະຊົນຈາກຕາຍໃນເມືອງເອມາອູດ.ແຕ່ໃນ ໂຢຮັນ 2:1-11 ພະອົງເປັນແຂກໃນງານໃດ? _________

**22** ພະເຢຊູ ສະແດງລິດອຳນາດໃນງານນັ້ນດ້ວຍເຫດການໃດ? ____________________

**23** ກ. ຕາມທຳມະດາພວກເຮົາກໍ່ອາດຈະເປັນແຂກໃນງານສົມລົດເໝືອນກັນແມ່ນບໍ່? ______

ຂ. ຕາມທຳມະດາເຮົາອາດຈະເອົານ້ຳປ່ຽນເປັນເຫຼົ້າແວງໄດ້ບໍ່? __________________

**24** ທຳມະດາເຮົາບໍ່ມີໂອກາດສະແດງລິດອຳນາດຂອງພະເຈົ້າ ດ້ວຍເຮັດການອັດສະຈັນຢ່າງນັ້ນແຕ່ເຮົາອາດຈະມີໂອກາດເວົ້າຄຳພິຍານຢູ່.

ເຮົາຍົກສະເໜີຄຳສັ່ງສອນຂອງ ພະເຢຊເລື່ອງການເປັນຜົວເມຍກັນໄດ້

(ມທ 5:32ມາລະໂກ10:9ມທ 22:2 ມທ25:10)

ຍົກຄຳສອນຂອງອາຈານ ໂປໂລ ກໍ່ໄດ້ດ້ວຍ

(1 ຕມທ 5:14 ໂລມ 7:2 ແລະ 1 ກລທ 7:10-11)

ກ. ຖ້າວ່າເຮົາຖືກເຊີນໄປເປັນກຽດໃນງານສົມລົດເຂົາອາດຈະເປີດໂອກາດໃຫ້ກ່າວຄຳໂອວາດແກ່ຄູ່ບ່າວສາວ ການນັ້ນເປັນໂອກາດຢ່າງໃດ? ____________________________

ຂ. ເມື່ອ ພະເຢຊູ ໄປຮ່ວມງານສົມລົດ ພະອົງສະແດງອຳນາດຢ່າງໃດ? _____________

**25** ທ່ານອາດຈະມີໂອກາດກ່າວພະຄຳຂອງ ພະເຈົ້າ ໃນງານໃດ? ____________________

**26** ໃຫ້ທ່ານລອງແຕ່ງຄຳເວົ້າມາ ເລື່ອງຄຳສັ່ງສອນຂອງ ພະເຢຊູ ກ່ຽວກັບການເປັນຜົວເມຍກັນ.

________________________________________________________________

________________________________________________________________

________________________________________________________________

**27** ກ່ຽວກັບຄຳສັ່ງສອນຂອງອາຈານ ໂປໂລ ເລື່ອງການເປັນຜົວເມຍກັນເດ ວ່າຢ່າງໃດແດ່?

________________________________________________________________

________________________________________________________________

________________________________________________________________

*ຍົກຕົວຢ່າງອີງຕາມ ຄວາມສຳພັນລະຫວ່າງຜົວເມຍ ປຽບຄືກັບຄວາມສຳພັນລະຫວ່າງ ພະເຢຊູ ແລະ ພວກຄຼິດສະຕຽນຈາກ ຂໍ້ພະຄຳພີຕໍ່ໄປນີ້ (ເອຊາຢາ 54:5 ໂຮເຊອາ 2:19 ພະນິມິດ 19:7)*

**28** ກ. ຖ້າວ່າທ່ານຈະຖືໂອກາດທີ່ຈະເວົ້າຄວາມໃນການລ້ຽງພິທີສົມລົດ ທ່ານອາດຈະປະກາດພະທຳໂດຍຍົກຄວາມ ສັ່ງສອນ ຈາກສອງຄົນໃດ? ______________________________

ຂ. ແລ້ວທ່ານຈະຍົກເລື່ອງວ່າຄວາມສຳພັນລະຫວ່າງຜົວກັບເມຍປຽບຄືຫຍັງ?

________________________________________________________________

**29** ກ. ເມື່ອພະເຢຊູ ໄປງານສົມລົດ ພະອົງປະກາດພະທຳດ້ວຍສະແດງອຳນາດດ້ວຍການເຮັດຫຍັງ? ________________________________________________

ຂ. ຖ້າວ່າທ່ານຈະມີໂອກາດໄປຮ່ວມງານສົມລົດ ອາດຈະເປັນໂອກາດຢ່າງໃດ? ________

**30** ໃຫ້ເຮົາຮຽນຄືນກ່ອນມີຫຼັກໃນພະຄຳພີກ່ຽວກັບຄົນທີ່ສວຍໂອກາດປ່າວປະກາດຂ່າວປະເສີດດັ່ງຕໍ່ໄປນີ້:



ກ. ໂປໂລ ແລະ ຊີລາ ປ່າວປະກາດໃນບ່ອນໃດ? ________

ຂ. ໃຫ້ໃຜຟັງ? ________________________________

ຄ. ຜູ້ທີ່ດີຈາກຜີສິງກັບໄປປ່າວປະກາດຢູ່ໃສ? ___________

ງ. ໃຫ້ໃຜຟັງ? ________________________________

ຈ. ຟີລິບ ປ່າວປະກາດໃນບ່ອນໃດ? ________________

ສ. ໃຫ້ໃຜຟັງ? ________________________________

ຊ. ແມ່ນໃຜພາອ້າຍມາຫາ ພະເຢຊູ? ____________________________________

ຍ. ແມ່ນ 4 ຄົນໃດຮ່ວມເຮັດອາຊີບດຽວກັນ ກ່ອນຈະຕິດຕາມ ພະເຢຊູ ໄປ? __________

________________________________________________________________

ດ. ອາຈານ ໂປໂລ ຮ່ວມກັບໝູ່ໃນອາຊີບດຽວແມ່ນອາຊີບໃດ? ____________________

**31** ກ. ໂປໂລສະແດງອຳນາດຂອງພະເຈົ້າ ໃຫ້ຜູ້ຮ່ວມທາງ 275 ຄົນຢູ່ໃສ? ______________
ຂ. ມັດທາຍຈັດຕຽມແຕ່ງຫຍັງໄວ້ຈຶ່ງເປັນການເປີດໂອກາດໃຫ້ ພະເຢຊູປ່າວປະກາດ?

______________________________________________________________

ຄ. ພະເຢຊູ ສະແດງອຳນາດຂອງ ພະເຈົ້າ ໃນງານສົມລົດຢ່າງໃດ? _________________

*ແຕ່ສ່ວນເລື່ອງຫຼັກສຳຄັນໃນຊີວິດ ໂອກາດດີທີ່ສຸດທີ່ຈະປະກາດຂ່າວປະເສີດຂອງ ພະເຢຊູ ຄືເມື່ອມີຄົນສະຫຼຽນຫຼັບຕາລາໂລກໄປ. ພະຄຳພີອ້າງເຖິງຄົນຊື່ "ລາຊະໂລ" ມີສອງຄົນ ທັງສອງຄົນນັ້ນຕາຍແລ້ວ. ໂຢຮັນ ບົດ 11 ເວົ້າເລື່ອງ "ລາຊະໂລ" ຜູ້ທີ່ເປັນສະຫາຍຮັກຂອງ ພະເຢຊູ ລາຊະໂລນັ້ນຕາຍໄປແລ້ວ ແລະ ພະເຢຊູ ໄປເຖິງບ້ານເຂົາ ພະອົງເຫັນຄວາມທຸກໃຈຂອງເຂົາແລະຮ້ອງໄຫ້ພ້ອມ ແຕ່ຕໍ່ໄປພະອົງຮ້ອງ ລາຊະໂລ ໃຫ້ເປັນຄືນມາແລ້ວລາສະໂລ ກໍ່ມີຊີວິດຄືນມາອີກ.*

**32** ກ. ໃນງານສົມລົດ ພະເຢຊູ ເຮັດຫຍັງ? ______________________________________
ຂ. ໃນໂອກາດທີ່ ລາຊະໂລ ຕາຍແລ້ວ ພະອົງເຮັດຫຍັງ? _________________________

**33** ກ. ຖ້າວ່າພວກເຮົາຈະໄປງານສົມລົດ ເຮັດເຊັ່ນດຽວກັບ ພະເຢຊູ ໄດ້ບໍ່? ______________
ຂ. ແຕ່ວ່າເຮົາອາດສວຍໂອກາດເຮັດຫຍັງໄດ້? __________________________________

**34** ກ. ຄັນພວກເຮົາເຫັນມິດສະຫາຍຂອງເຮົາຕາຍໄປແລ້ວ ທຳມະດາເຮົາຈະເຮັດໃຫ້ຄືນມາຈາກຕາຍໄດ້ບໍ່? ______________________________________________________
ຂ. ເຮົາກ່າວເລື້ອງໃດ? __________________________________________________

**35** ສ່ວນຄົນທີ່ຢູ່ເພື່ອວັນຖຸສິ່ງຂອງ ຫຼື ອາໄສຜີພໍ່ ຜີແມ່ ຫຼື ຜູ້ທີ່ຖືວ່າຕາຍແລ້ວຈະໄດ້ເກີດມາໃໝ່ຊາດໜ້າຄວາມ ຕາຍເປັນໜ້າເສັຽດາຍແທ້ເພາະສຳ ລັບພວກເຂົາ ເພາະຫຼັງຈາກຕາຍບໍ່ມີສິ່ງທີ່ແນ່ນອນ.ແຕ່ຝ່າຍຄົນທີ່ເຊື່ອວາງໃຈໃນພະເຢຊູ ມີສິ່ງແນ່ນອນໃນອານາຄົດຫຼັງຈາກຕາຍ (ຢຮ 14:1-7 ລູກາ 16:19-13) ລູກາ 16: 19-31 ເວົ້າເລື່ອງເສດຖີກັບໃຜ? ___________

<u>*ໝາຍເຫດ:*</u> *ລາຊະໂລ ຄົນນີ້ ບໍ່ແມ່ນຄົນດຽວກັບ ລາຊະໂລ ຜູ້ທີ່ ພະເຢຊູ ສັ່ງໃຫ້ຄືນຂຶ້ນມາຈາກຕາຍເປັນອີກຄົນໜຶ່ງຕາງຫາກ ແຕ່ມີຊື່ຄືກັນ.*

**36** ກ. ລາຊະໂລ ໃນຂ່າວປະເສີດ ລູກາ ນີ້ຕາຍແລ້ວໄປໃສ? _________________________
ຂ. ເສດຖີ ເດ? ________________________________________________________

**37** ກ. ລາຊະໂລ ດີກວ່າກ່ອນບໍ່? _____________________________________________
ຂ. ເສດຖີ ເດເປັນຈັ່ງໃດ? _______________________________________________

**38** ດັ່ງນັ້ນເຖິງຜູ້ຕາຍຈະຕາຍແບບລາຊະໂລກໍ່ຕາມ ຫຼື ຈະຕາຍແບບເສດຖີກໍ່ຕາມເຂົາທັງສອງບໍ່ມີໂອກາດກັບມາ ປ່າວປະກາດຂ່າວປະເສີດໄດ້ ມີແຕ່ຜູ້ໃດຍັງຈະປ່າວປະກາດໄດ້? ________

________________________________________________________________

**39** ລາຊະໂລ ຜູ້ຍາກຈົນໃນຊີວິດເປັນຕົວຢ່າງໃຫ້ເຮົາວ່າ ເຮົາຈົ່ງດຳເນີນຊີວິດຕາມເພິ່ນ ແລະ ເສດຖີຢາກໄດ້ໂອ ກາດກັບມາບອກເຕືອນຍາດພີ່ນ້ອງຂອງຕົນ ເພາະສະນັ້ນຈຶ່ງເຫັນວ່າທັງສອງຝ່າຍເປັນບົດຮຽນສອນເຮົາຜູ້ທີ່ຍັງມີຊີວິດຢູ່.

ກ. ລາຊະໂລ ຜູ້ຍາກຈົນຈະກັບມາເຕືອນເຂົາໄດ້ບໍ່? ____________________________

ຂ. ເສດຖີຢາກກັບມາເຕືອນເຂົາແຕ່ເພິ່ນກັບມາໄດ້ບໍ່? __________________________

ຄ. ແມ່ນຜູ້ໃດທີ່ຍັງເຕືອນເຂົາໄດ້? ________________________________________

**40** ມີຫຼັກສຳຄັນໃນຊີວິດສອງປະການໃດທີ່ເຮົາອາດຈະສວຍໂອກາດປ່າວປະກາດຂ່າວປະເສີດໄດ້? ___________________________ ແລະ _____________________________

**41** ກ. ໃນພະຄຳພີໃໝມີຄົນຊື່ ລາຊະໂລ ຈັກຄົນ? ________________________________

ຂ. ຜູ້ເປັນນ້ອງຂອງມາລີອາແລະມາທາຕາຍແລ້ວຕໍ່ໄປເປັນຈັ່ງໃດ? ________________

ຄ. ລາຊະໂລຜູ້ຍາກຈົນຕາຍແລ້ວເປັນຢ່າງໃດ? _________________________________

*ທີ່ຈິງຄວາມຕາຍຂອງຄຣິດສະຕຽນບໍ່ແມ່ນສິ່ງທີ່ ໜ້າເສົ້າ ໃຈຈັກດີ້ ເພາະຜູ້ທີ່ຫຼັບຕາລາໂລກໄປນັ້ນໄດ້ເຂົ້າໄປຮັບ ບໍລະດົກໃນທີ່ສຸຂະເສີມ ພິທີຝັງສົບຄົນຕາຍນັ້ນເປັນໂອກາດກ່າວເລື່ອງຄວາມຫວັງຂອງຄຣິດສະຕຽນ.*

*ເຊັ່ນດຽວກັນ ພິທີຝັງສົບຂອງຄົນຄຣິດສະຕຽນເປັນໂອກາດສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງຄວາມຕາຍຂອງຜູ້ທີ່ບໍ່ມີຄວາມຫວັງໃຈໃນພະເຢຊູ ແລະຜູ້ທີ່ມີໃນ ພະອົງ, ແຕ່ທ່ານຢ່າຊ້ຳເຕີມ ຫຼື ເວົ້າໃຫ້ເຂົາເສຍໃຈໂດຍກົງໂພດ.*

**42** ແຕ່ຫຼັກຖານສຳຄັນໃນຊີວິດທີ່ເປີດໃຫ້ມີໂອກາດກ່າວຄຳພິຍານຍັງມີອີກຄື: ການຖະຫວາຍລູກນ້ອຍ ແລະ ການ ຖະຫວາຍເຮືອນ ຫຼື ຕຶກອາຄານບ້ານພັກ.

ກ. ໃນພະທຳໜຶ່ງຊາມູເອນ ບົດທີ 1 ແລະ 2 ອ້າງເຖິງການຖະຫວາຍລູກນ້ອຍ ຫຼື ການຖະຫວາຍອາຄານ?___________________________________________________

ຂ. ລູກາ 2:22 ເດ? _______________________________________________

**43** ເທື່ອໃດທີ່ຄຣິດສະຕຽນຈະຖະຫວາຍລູກໃຫ້ ພະເຈົ້າກໍ່ເປັນໂອກາດຢ່າງໃດ? ___________

**44** ກ. ພະທຳ ອົບພະຍົບ ບົດທີ 40 ອ້າງເຖິງການຖະຫວາຍຫຍັງ? ____________________

ຂ. ປະຫວັດກະສັດທີໜຶ່ງ ບົດທີ 8 ເດ? ______________________________________

**45** ເຖິງວ່າບໍ່ເຫັນຫຼັກຕາຍຕົວໃນພະຄຳພີເລື່ອງພິທີຖະຫວາຍເຮືອນກໍ່ຕາມ ແຕ່ເຫັນວ່າເຮືອນເປັນສູນກາງໃນການ ປ່າວປະກາດກໍ່ໄດ້ (ມທ 9:10)ເປັນສິ່ງທີ່ສັ່ງສອນຄອບຄົວກໍ່ໄດ້ແລະເປັນທີ່ນະມັດສະການ ພະເຈົ້າ ກໍ່ໄດ້ (ໂລມ 16:5) ດັ່ງນັ້ນຖ້າວ່າເຮົາຈະຂຶ້ນເຮືອນໃໝ່ເຮົາຈະເຮັດຢ່າງໃດເພື່ອສວຍໂອກາດປ່າວປະກາດຂ່າວປະເສີດ? __________________________

**46** ເພື່ອຈະຮຽນຄືນອີກເລື່ອງການສວຍໂອກາດປ່າວປະກາດໃຫ້ບຸກຄົນຟັງ

ກ. ສອງຄົນໃດປ່າວປະກາດໃນຄຸກ? ____________________

ຂ. ແມ່ນໃຜພາອ້າຍມາຫາ ພະເຢຊູ? ____________________

ຄ. ຜູ້ໃດປ່າວປະກາດເມື່ອເວລາຮ່ວມເດີນທາງໄປກັບຜູ້ອື່ນ? ____________

ງ. ແມ່ນໃຜຮ່ວມສາມັກຄີກັບຄົນທີ່ເຮັດອາຊີບດຽວກັນແລ້ວປະກາດໃຫ້ເຂົາຮູ້? ________

ຈ. ແມ່ນສາວົກຄົນໃດທີ່ຮັບລ້ຽງແຂກສະເພາະເພື່ອຈະໃຫ້ຜູ້ອື່ນພົບ ພະເຢຊູ? ________

**47** ມີຫຼັກສຳຄັນໃດແດ່ໃນຊີວິດທີ່ອາດຈະເປີດໂອກາດໃຫ້ເຮົາປ່າວປະກາດຕໍ່ຫຼາຍຄົນລວມກັນ? (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ງານ ____________________

ຂ. ງານ ____________________

ຄ. ການຖະຫວາຍ ____________________

ງ. ການຖະຫວາຍ ____________________

**48** ຄວາມສຳພັນລະຫວ່າງຜົວເມຍ ປຽບຄືກັບຄວາມສຳພັນໃດ ຝ່າຍວິນຍານ? ____________

____________________

**49** ໃນພະຄຳພີໃໝ່ ມີຄົນຊື່ ລາຊະໂລ ຈັກຄົນ? ____________________

*ໃນ ໂກໂລຊາຍ 4:5 ບອກວ່າ "ຈົ່ງປະຕິບັດຕໍ່ຄົນພາຍນອກດ້ວຍໃຊ້ສະຕິປັນຍາ ໂດຍສວຍໂອກາດ." ພວກສາວົກ ອອກໄປປ່າວປະກາດຂ່າວປະເສີດອານາຈັກຂອງ ພະເຈົ້າ ໃນຍຸກທີ່ຄົນຢິວທຸກຄົນຢູ່ໃຕ້ການປົກຄອງຂອງເຈົ້າຈັກກະພັດໂລມ. ພວກຈັກກະພັດໂລມຊອກຫາໂອກາດທຸກຢ່າງທີ່ຈະຕໍ່ສູ້ຜູ້ຕາງ ໜ້າຂອງອານາຈັກສະຫວັນ ເພາະສະນັ້ນລູກສິດຂອງ ພະເຢຊູຈຳ ເປັນຕ້ອງໃຊ້ສະຕິປັນຍາຈຶ່ງຈະປ່າວປະກາດພະທຳຂອງ ພະເຈົ້າ. ດ້ວຍສວຍໂອກາດ.*

*ຢ່າລືມຕອບບົດເສັງໂລດເດີ*

**ຄຳຕອບ:**

**1** *ກ. ເລື່ອງການເປັນພິຍານ. ຂ. ເລື່ອງການນຳຄົນມາເຊື່ອໃນ ພະເຢຊູ*

**2** *ກ. ຖືກ*

**3** *ກ. ບ້ານຕົນເອງ. ຂ. ຍາດພີ່ນ້ອງ.*

**4** *ກ. ເປໂຕ. ຂ. ເປັນອ້າຍນ້ອງຄີງ.*

**5** *ກ. ນັກໂທດ. ຂ. ທຳມະໂລງ. ຄ. ບໍ່*

**6** *ໂປໂລ ແລະ ຊີລາ*

**7** *ກ. ໃກ້ກັນ. ຂ. ບໍ່*

**8** *ກ. ອັນເດອາ. ຂ. ໂປໂລ ແລະ ຊີລາ.*

**ຄໍາຕອບ (ຕໍ່):**

**9** *ກ. ເປໂຕ ອັນເດອາ ຢາໂກໂບ ໂຢຮັນ ຂ. ຊ່າງຫຍິບຜ້າເຕັ້ນ.*

**10** *ເວລາເດີນທາງ.*

**11** *ຜູ້ດຽວ.*

**12** *ກ. ຄຸກ. ຂ. ຍາດພີ່ນ້ອງ...ບ້ານຕົນເອງ. ຄ. ເປໂຕ (ອ້າຍກໍ່ໄດ້)*
*ງ. ຟີລິບ...ເວລາເດີນທາງ.*

**13** *ເທວະດາຂອງ ພະເຈົ້າ.*

**14** *ມີ 275 ຄົນ (ບໍ່ນັບ ໂປໂລ ເຂົາ)*

**15** *ກ. ໂປໂລ ແລະ ຊີລາ. ຂ. ເປໂຕ ອັນເດອາ ຢາໂກໂບ ໂຢຮັນ.*
*ຄ. ໄທເອຕີໂອເປຍ. ງ. ອັນເດອາ. ຈ. ໂປໂລ.*

**16** *ກ. ຟີລິບ. ຂ.ໂປໂລ .*

**17** *ບໍ່*

**18** *ແຕ່ງງານລ້ຽງໄວ້.*

**19** *ຮັບລ້ຽງແຂກໄດ້.*

**20** *ກ. ມັດທາຍ.*
*ຂ. ພະເຢຊູ ພ້ອມຄົນເກັບພາສີ ແລະ ຄົນນອກສິນທໍາ.*
*ຄ. ມັດທາຍ.*
*ງ. ພະເຢຊູ.*
*ຈ. ຜູ້ເກັບພາສີ ແລະ ຄົນນອກສິນທໍາ.*

**21** *ງານສົມລົດ.*

**22** *ເອົານໍ້າປ່ຽນເປັນເຫຼົ້າແວງ.*

**23** *ກ. ແມ່ນ. ຂ. ບໍ່*

**24** *ກ. ໂອກາດປ່າວປະກາດ. ຂ. ເອົານໍ້າປ່ຽນເປັນເຫຼົ້າແວງ.*

**25** *ງານສົມລົດ.*

**26** *ບໍ່ມີຄໍາຕອບຕາຍຕົວໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່*

**27** *ບໍ່ມີຄໍາຕອບຕາຍຕົວຄືກັນ.*

**28** *ກ. ພະເຢຊູ ແລະ ອາຈານ ໂປໂລ.*
*ຂ. ປຽບກັບຄວາມສໍາພັນລະຫວ່າງ ພະເຢຊູ ກັບພວກຄຣິດສະຕຽນ.*

**29** *ກ. ເອົານໍ້າປ່ຽນເປັນເຫຼົ້າແວງ. ຂ. ປ່າວປະກາດ*

**30** *ກ. ໃນຄຸກ. ຂ. ນາຍທໍາມະໂລງ. ຄ.ບ້ານຂອງຕົວເອງ. ງ. ຍາດພີ່ນ້ອງ.*
*ຈ. ເວລານັ່ງໃນລົດໄປຕາມທາງ. ສ. ໄທເອຕີໂອເປຍ. ຊ. ອັນເດອາ.*
*ຍ. ເປໂຕ ອັນເດອາ ຢາໂກໂບ ໂຢຮັນ ດ. ຊ່າງຫຍິບຜ້າເຕັ້ນ.*

**31** *ກ. ໃນເຮືອ. ຄ. ເອົານໍ້າປ່ຽນເປັນເຫຼົ້າແວງ. ຂ. ການລ້ຽງອາຫານ.*

**ຄຳຕອບ (ຕໍ່):**

**32** *ກ. ເອົານ້ຳປຸ່ງນເປັນເຫຼົ້າແວງ.   ຂ. ເຮັດໃຫ້ລາຊະໂລຄືນມາຈາກຕາຍ.*

**33** *ກ. ບໍ່ໄດ້   ຂ. ທຸກທໍລະມານ (ແດນມໍລະນາ)*

**34** *ກ. ຄົງຈະບໍ່ໄດ້   ຂ. ກ່າວເລື່ອງຂ່າວປະເສີດໄດ້.*

**35** *ລາຊະໂລ*

**36** *ກ. ເອິກຂອງອັບລາຮາມ (ທີ່ສຸຂະເສີມ)*
*ຂ. ແດນມໍລະນາ (ບ່ອນທຸກທໍລະມານ)*

**37** *ກ. ດີກວ່າ.   ຂ. ກ່າວເລື່ອງ ພະເຍຊູໄດ້.*

**38** *ຄົນເຮົາທີ່ມີຊີວິດຢູ່ແລະເຊື່ອ ພະເຈົ້າ.*

**39** *ກ.ບໍ່ ຂ.ບໍ່ ຄ.ພວກເຮົາທີ່ຍັງມີຊີວິດແລະເຊື່ອ ພະເຈົ້າ.*

**40** *ງານສົມລົດ ແລະ ເວລາຄົນຕາຍ.*

**41** *ກ. ສອງຄົນ.   ຂ. ຕາຍແລ້ວ ພະເຍຊູ ສັ່ງໃຫ້ເປັນຄືນມາຈາກຕາຍ.   ຄ. ຕາຍແລ້ວເທວະດາຮັບເອົາໄປທີ່ສຸຂະເສີມ.*

**42** *ກ.ລູກນ້ອຍ. ຂ.ລູກນ້ອຍ.*

**43** *ປ່າວປະກາດຂ່າວປະເສີດ.*

**44** *ກ. ທໍເຕັ້ນສັກສິດ.   ຂ. ພະວິຫານ.*

**45** *ຖະຫວາຍເຮືອນ.*

**46** *ກ. ໂປໂລ ແລະ ຊີລາ.   ຂ. ອັນເດອາ.   ຄ. ຟີລິບ.   ງ. ໂປໂລ.   ຈ. ມັດທາຍ.*

**47** *ກ. ສົມລົດ.   ຂ. ຟັງສິບ.   ຄ. ເຮືອນ ຫຼື ອາຄານ.   ງ. ລູກນ້ອຍ.*

**48** *ລະຫວ່າງ ພະເຍຊູ ກັບພວກຫຼິດສະຕຽນ.*

**49** *ສອງຄົນ.*